ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ /ສພຊ

ນະຄອນຫຼວງວຽງຈັນ, ວັນທີ

# "ຮ່າງ"

# ກົດໝາຍ
# ວ່າດ້ວຍທະນາຄານແຫ່ງ
# ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ພາກທີ I
## ບົດບັນຍັດທົ່ວໄປ

***ມາດຕາ 1 ຈຸດປະສົງ***

ກົດໝາຍ*ສະບັບນີ້ກຳນົດ ຫຼັກການ ແລະ ລະບຽບການ ກ່ຽວກັບ*ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ທະນາຄານແຫ່ງ *ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເພື່ອຮັບປະກັນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຕົນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ຮັກສາສະຖຽນລະພາບທາງດ້ານເງິນຕາ, ຄວາມໝັ້ນຄົງຂອງສະຖາບັນການເງິນ, ຮັບປະກັນລະບົບການຊຳລະ ມີຄວາມສະດວກ, ວ່ອງໄວ ແລະ ປອດໄພ* ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງ*ຊາດ.*

***ມາດຕາ 2 ທະນາຄານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ***

*ທະນາຄານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕໍ່ໄປນີ້ເອີ້ນວ່າ ທະນາຄານແຫ່ງ ສປປ ລາວ ແມ່ນ*ທະນາຄານກາງຂອງປະເທດ*.*

*ທະນາຄານແຫ່ງ ສປປ ລາວ ຂຽນຫຍໍ້ພາສາລາວ "ທຫລ" ແລະ ມີຊື່ເປັນພາສາອັງກິດ "Bank of the Lao People's Democratic Republic", ຂຽນຫຍໍ້ເປັນພາສາອັງກິດ "BOL".*

***ມາດຕາ 3 ການອະທິບາຍຄຳສັບ***

*ຄຳສັບຕ່າງໆທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:*

*1. **ທະນາຄານກາງ** ໝາຍເຖິງ ທະນາຄານຂອງສະຖາບັນການເງິນ;*

*2. **ສະຖາບັນການເງິນ** ໝາຍເຖິງ ທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຊຶ່ງຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ;*

*3. **ຂະແໜງການທະນາຄານ** ໝາຍເຖິງ ທະນາຄານແຫ່ງ ສປປ ລາວ ແລະ ສະຖາບັນການເງິນ;*

4. ***ທະນະບັດ*** *ໝາຍເຖິງ ເງິນກີບໃນຮູບແບບຂອງໃບເຈ້ຍ ຫຼື ປຣາສຕິກ;*

5. ***ເງິນຫຼຽນ*** *ໝາຍເຖິງ ເງິນກີບ ຫຼື ອັດ ໃນຮູບແບບຂອງໂລຫະ;*

6. ***ທະນະບັດ ແລະ ຫຼຽນ ທີ່ລະນຶກ*** *ໝາຍເຖິງ ທະນະບັດ ຫຼື ຫຼຽນ ທີ່ພິມຂຶ້ນເນື່ອງໃນວັນ ຫຼື ເຫດການສຳຄັນຕ່າງໆຂອງຊາດ ຊຶ່ງບໍ່ແມ່ນພາຫະນະການຊຳລະທົ່ວໄປ;*

7. ***ເອກະສານມີຄ່າ*** *ໝາຍເຖິງ ໜັງສືຢັ້ງຢືນພັນທະໃນການຊຳລະໜີ້ ລະຫວ່າງຜູ້ຈຳໜ່າຍ ກັບຜູ້ຖືຄອງເອກະສານມີຄ່າ ໂດຍມີການກຳນົດເງື່ອນໄຂດ້ານໄລຍະເວລາ, ດອກເບ້ຍ ແລະ ເງື່ອນໄຂອື່ນໆ. ເອກະສານມີຄ່າປະກອບມີ ພັນທະບັດປະເພດຕ່າງໆ, ໃບສັນຍາໃຊ້ໜີ້, ໃບຢັ້ງຢືນເງິນຝາກ, ແຊັກ ແລະ ເຄື່ອງມືຊຳລະອື່ນໆ.*

***ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບທະນາຄານແຫ່ງ ສປປ ລາວ***

*ລັດຊຸກຍູ້, ສົ່ງເສີມ ແລະ ສ້າງເງື່ອນໄຂສະດວກໃນດ້ານຕ່າງໆໃຫ້ແກ່ການຈັດຕັ້ງ ແລະ ເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ ໃຫ້ເຂັ້ມແຂງ, ທັນສະໄໝ ດ້ວຍການວາງນະໂຍບາຍ, ກຳນົດຍຸດທະສາດ, ສ້າງພື້ນຖານໂຄງລ່າງ, ປະກອບບຸກຄະລາກອນ,* ວັດຖູປະກອນ ຕາມຄວາມເໝາະສົມ.

***ມາດຕາ 5 ຫຼັກການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ***

*ທະນາຄານແຫ່ງ ສປປ ລາວ ເຄື່ອນໄຫວວຽກງານ ຕາມຫຼັກການພື້ນຖານ ດັ່ງນີ້:*

1. *ຮັບປະກັນຄວາມສອດຄ່ອງກັບແນວທາງນະໂຍບາຍຂອງລັດຖະບານ, ກົດໝາຍ ແລະ ລະບຽບການ, ສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ;*
2. *ປະຕິບັດລະບອບແບບແຜນວິທີເຮັດວຽກ ຕາມຫຼັກການລວມສູນປະຊາທິປະໄຕ;*
3. *ມີການກວດກາພາຍໃນ ແລະ ຈາກພາຍນອກ ຢ່າງເປັນປົກກະຕິ.*

***ມາດຕາ 6 ການພົວພັນຮ່ວມມືສາກົນ***

*ລັດເປີດກວ້າງການພົວພັນຮ່ວມມື ແລະ ເຊື່ອມໂຍງກັບຕ່າງປະເທດ, ພາກພື້ນ ແລະ ອົງການຈັດຕັ້ງສາກົນກ່ຽວກັບວຽກງານຂະແໜງການທະນາຄານ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານເຕັກນິກວິຊາການ, ເຕັກໂນໂລຊີ, ການຄົ້ນຄວ້າວິທະຍາສາດ, ການພັດທະນາຊັບພະຍາກອນມະນຸດ ແລະ ວຽກງານອື່ນ ທີ່ກຳນົດໄວ້ໃນສັນຍາສາກົນ ແລະ ສົນທິສັນຍາທີ່ ສປປ ລາວ ເປັນພາຄີ.*

# ***ພາກທີ II***

# ***ທີ່ຕັ້ງ, ພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່***

## ***ໝວດທີ 1***

## ***ທີ່ຕັ້ງ ແລະ ພາລະບົດບາດ***

**ມາດຕາ 7 ທີ່ຕັ້ງ**

ທະນາຄານແຫ່ງ ສປປ ລາວ ເປັນ*ອົງການລັດ*ທຽບເທົ່າກະຊວງ, ມີຖານະເປັນນິຕິບຸກຄົນ ແລະ ມີສຳນັກງານໃຫຍ່ຕັ້ງຢູ່ນະຄອນຫຼວງວຽງຈັນ.

**ມາດຕາ 8 ພາລະບົດບາດ**

ທະນາຄານແຫ່ງ ສປປ ລາວ ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານ ໃນການຄຸ້ມຄອງມະຫາພາກດ້ານເງິນຕາ *ໃຫ້ມີສະຖຽນລະພາບ, ຄຸ້ມຄອງສະຖາບັນການເງິນໃຫ້ມີຄວາມໝັ້ນຄົງ ແລະ ລະບົບຊໍາລະໃຫ້ມີປະສິດທິພາບ* ເພື່ອຊຸກຍູ້ການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ.

## ໝວດທີ 2
## ຂອບເຂດສິດ ແລະ ໜ້າທີ່

**ມາດຕາ 9 ຂອບເຂດສິດ**

ທະນາຄານແຫ່ງ ສປປ ລາວ ມີຂອບເຂດສິດ ດັ່ງນີ້:

*1. ສ້າງແຜນຍຸດທະສາດຂອງຂະແໜງການທະນາຄານ ເພື່ອສະເໜີຕໍ່ລັດຖະບານຮັບຮອງ;*

*2. ອອກ, ປັບປຸງ ແລະ ຍົກເລີກ ນິຕິກໍາ ໃນຂອບເຂດຂອງຕົນ ແລະ ສະເໜີອົງການກ່ຽວຂ້ອງ ເພື່ອອອກນິຕິກໍາກ່ຽວກັບວຽກງານຂະແໜງການທະນາຄານ;*

3. *ພິມ,* ພິມຈໍາໜ່າຍ, *ຖອນ, ທໍາລາຍ*ທະນະບັດ ແລະ ເງິນຫຼຽນ ພຽງແຕ່ຜູ້ດຽວ*ຕາມທີ່ກໍານົດໄວ້ໃນກົດໝາຍສະບັບນີ້;*

*4. ນໍາໃຊ້ເຄື່ອງມືນະໂຍບາຍເງິນຕາ ເພື່ອປະຕິບັດນະໂຍບາຍເງິນຕາໃນການດັດສົມຕະຫຼາດເງິນ;*

*5.* ປະຕິບັດນະໂຍບາຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ອັດຕາແລກປ່ຽນ;

6. *ອອກ*ຈໍາໜ່າຍພັນທະບັດ*ຂອງທະນາຄານແຫ່ງ ສປປ ລາວ*, ຊື້, ຂາຍ ພັນທະບັດໂດຍກົງກັບ*ສະຖາບັນການເງິນ;*

*7.* ໃຫ້ກູ້ຢືມເປັນແຫຼ່ງສຸດທ້າຍ *ແກ່ສະຖາບັນການເງິນ ເພື່ອຮັບປະກັນສະພາບຄ່ອງຂອງສະຖາບັນດັ່ງກ່າວ;*

*8. ອອກ, ຖອນ ໃບອະນຸຍາດດໍາເນີນທຸລະກິດ ແລະ ໂຈະຊົ່ວຄາວການດໍາເນີນທຸລະກິດ ຂອງສະຖາບັນການເງິນ, ທຸລະກິດເງິນຕາຕ່າງປະເທດ ແລະ ທຸລະກິດຊໍາລະ;*

*9. ນໍາໃຊ້ມາດຕະການຕໍ່ສະຖາບັນການເງິນ, ຫົວໜ່ວຍທຸລະກິດເງິນຕາຕ່າງປະເທດ ແລະ ຫົວໜ່ວຍທຸລະກິດຊໍາລະ ທີ່ລະເມີດກົດໝາຍ ແລະ ລະບຽບການ;*

*10.* ເກັບກໍາ, *ສັງລວມ* ແລະ ວິໄຈຂໍ້ມູນຂ່າວສານທາງດ້ານເສດຖະກິດ, ການເງິນ ເງິນຕາ ແລະ ການເຄື່ອນໄຫວຂອງສະຖາບັນການເງິນ *ທັງ*ພາຍໃນ ແລະ ຕ່າງປະເທດ;

*11. ເປີດບັນຊີເງິນຝາກ ນໍາ*ທະນາຄານກາງຂອງຕ່າງປະເທດ, ອົງການຈັດຕັ້ງການເງິນສາກົນ ແລະ ສະຖາບັນການເງິນຕ່າງປະເທດ *ຕາມການເຫັນດີຂອງລັດຖະບານ;*

12. *ສະເໜີລັດຖະບານພິຈາລະນາອະນຸມັດການສ້າງຕັ້ງ ຫຼື ຍຸບເລີກສາຂາທະນາຄານແຫ່ງ ສປປ ລາວ;*

13. *ປະຕິບັດສິດອື່ນໆຕາມທີ່ກໍານົດ ໄວ້ໃນກົດໝາຍ ແລະ ລະບຽບການ.*

**ມາດຕາ 10 ໜ້າທີ່**

ທະນາຄານແຫ່ງ ສປປ ລາວ ມີໜ້າທີ່ ດັ່ງນີ້:

*1. ຄົ້ນຄວ້າຫັນເອົານະໂຍບາຍ, ແຜນການ, ມະຕິກົກລົງຂອງລັດຖະບານ ມາເປັນແຜນງານ ແລະ ໂຄງການລະອຽດ ຂອງທະນາຄານແຫ່ງ ສປປ ລາວ ພ້ອມທັງຮັບຜິດຊອບໃນການຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນສູງໃນຂອບເຂດທົ່ວປະເທດ;*

*2. ຮັກສາສະຖຽນລະພາບເງິນຕາແຫ່ງຊາດ ໃຫ້ມີຄວາມໝັ້ນທ່ຽງ;*

*3. ຄົ້ນຄວ້ານະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ພ້ອມທັງຕິດຕາມການຈັດຕັ້ງປະຕິບັດ ແລະ ຄົ້ນຄວ້າມາດຕະການແກ້ໄຂ;*

*4.* ຄຸ້ມຄອງ ແລະ ດັດສົມບໍລິມາດເງິນຕາໃນຂອດຈໍລະຈອນ *ໃນຂອບເຂດທົ່ວປະເທດ;*

*5.* ຄຸ້ມຄອງຄັງສຳຮອງເງິນຕາຕ່າງປະເທດ *ເພື່ອຮັບປະກັນການນຳເຂົ້າ, ການຊຳລະໜີ້ສິນຂອງລັດ ແລະ ເອກະຊົນ ຢູ່ຕ່າງປະເທດ;*

*6. ຄຸ້ມຄອງເງິນຕາຕ່າງປະເທດ ເພື່ອຄຸ້ມຄອງການເຄື່ອນໄຫວທຸລະກິດ ແລະ ທຸລະກຳ ເງິນຕາຕ່າງປະເທດ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ,*

*7. ຈັດຕັ້ງ ແລະ ພັດທະນາຕະຫຼາດເງິນ;*

8. ຄຸ້ມຄອງ ແລະ ກວດກາ ການເຄື່ອນໄຫວຂອງບັນດາ*ສະຖາບັນການເງິນ, ຫົວໜ່ວຍທຸລະກິດເງິນຕາຕ່າງປະເທດ ແລະ ຫົວໜ່ວຍທຸລະກິດຊຳລະ ຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ;*

*9. ສ້າງ ແລະ ພັດທະນາເຄື່ອງມື, ລະບົບກົນໄກການຊຳລະ ໃຫ້ມີຄວາມປອດໄພ ເພື່ອຕອບສະໜອງໄດ້ຄວາມຕ້ອງການໃນການຊຳລະໃນຂອບເຂດທົ່ວປະເທດ;*

10. ລາຍງານກ່ຽວກັບການການເຄື່ອນໄຫວວຽກງານຂອງຕົນ ແລະ ບາງບັນຫາພົ້ນເດັ່ນທາງດ້ານເສດຖະກິດ ໃຫ້ລັດຖະບານຊາບຢ່າງເປັນປົກກະຕິ;

11. ເປັນຕົວແທນໃຫ້ລັດຖະບານຢູ່ໃນອົງການຈັດຕັ້ງການເງິນສາກົນ, ພົວພັນ, ຮ່ວມມື ແລະ ເຊັນສັນຍາກ່ຽວກັບວຽກງານການເງິນ ເງິນຕາກັບຕ່າງປະເທດ ແລະ ອົງການຈັດຕັ້ງການເງິນສາກົນ ຕາມການມອບໝາຍ ຂອງລັດຖະບານ;

12. ເປີດ ແລະ ຄຸ້ມຄອງບັນຊີເງິນຝາກ ທີ່ເປັນເງິນຕາຕ່າງປະເທດ ຂອງລັດຖະບານ ຢູ່ຕ່າງປະເທດ;

13. ຮັບເປີດບັນຊີເງິນຝາກໃຫ້ແກ່ລັດຖະບານ ແລະ ອົງການຈັດຕັ້ງສາກົນ;

14. ອອກຈຳໜ່າຍ ພັນທະບັດຂອງລັດຖະບານ ຫຼື ພັນທະບັດທີ່ລັດຖະບານເປັນຜູ້ຄ້ຳປະກັນ ຕາມລະບຽບການກ່ຽວຂ້ອງ;

15. ຄົ້ນຄວ້າປະກອບຄຳເຫັນໃຫ້ແກ່ລັດຖະບານ ໃນການກູ້ຢືມເປັນເງິນຕ່າງປະເທດ ຢູ່ພາຍໃນ ແລະ ຕ່າງປະເທດ;

16. *ປະສານສົມທົບ ກັບຂະແໜງການກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ໃນການປະຕິບັດພາລະ*ບົດບາດຂອງຕົນ;

*17. ສ້າງ, ປັບປຸງ, ຄຸ້ມຄອງ ແລະ ພັດທະນາລະບົບບັນຊີ ຂອງຂະແໜງການທະນາຄານ;*

*18. ຄຸ້ມຄອງ ແລະ ບໍລິຫານຊັບສິນຂອງທະນາຄານແຫ່ງ ສປປ ລາວ ໃຫ້ມີຄວາມປອດໄພ ແລະ ມີປະສິດທິຜົນ;*

*19. ຄຸ້ມຄອງວຽກງານການປົກປ້ອງເງິນຝາກ ແລະ ການປົກປ້ອງຜູ້ຊົມໃຊ້ທາງດ້ານການເງິນ;*

*20. ປະຕິບັດໜ້າທີ່ອື່ນຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.*

# *ພາກທີ III*
# *ໂຄງປະກອບການຈັດຕັ້ງ*

***ມາດຕາ 11 ໂຄງປະກອບການຈັດຕັ້ງຂອງທະນາຄານແຫ່ງ ສປປ ລາວ***

*ທະນາຄານແຫ່ງ ສປປ ລາວ ມີໂຄງປະກອບການຈັດຕັ້ງ ດັ່ງນີ້:*

1. *ສະພາບໍລິຫານ;*
2. *ຜູ້ວ່າການ ແລະ ຮອງຜູ້ວ່າການ;*
3. *ຄະນະກຳມະການຕ່າງໆ;*
4. *ກົງຈັກຊ່ວຍວຽກ ແລະ ພະນັກງານ.*

## ໝວດທີ 1
## ສະພາບໍລິຫານ

**ມາດຕາ 12 ສະພາບໍລິຫານ**

ສະພາບໍລິຫານ ແມ່ນອົງການບໍລິຫານສູງສຸດ ຂອງທະນາຄານແຫ່ງ ສປປ ລາວ.

ສະພາບໍລິຫານ ປະກອບດ້ວຍ*ສະມາຊິກ ຄື*: ປະທານ, ຮອງປະທານ ແລະ ກຳມະການຈຳນວນໜຶ່ງ *ຢ່າງໜ້ອຍ 7 ຄົນ.*

**ມາດຕາ 13 ໂຄງປະກອບຂອງສະພາບໍລິຫານ**

ສະມາຊິກສະພາບໍລິຫານ ປະກອບດ້ວຍ:

1. ຮອງນາຍົກລັດຖະມົນຕີ ເປັນປະທານ;
2. ລັດຖະມົນຕີກະຊວງການເງິນ ເປັນຮອງປະທານ;
3. ຜູ້ວ່າການ ເປັນຮອງປະທານ *ທັງເປັນຜູ້ປະຈຳການ*;
4. *ກຳມະການ*ຈຳນວນໜຶ່ງ ທີ່ມາຈາກ*ທະນາຄານແຫ່ງ ສປປ ລາວ, ກະຊວງ ແລະ ຂະແໜງການ ທີ່ກ່ຽວຂ້ອງກັບການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ.*

**ມາດຕາ 14 ການແຕ່ງຕັ້ງ ແລະ ອາຍຸການຂອງສະພາບໍລິຫານ**

ສະມາຊິກສະພາບໍລິຫານຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງຜູ້ວ່າການ.

ສະພາບໍລິຫານມີອາຍຸການ ຫ້າ ປີ *ແລະ* ສາມາດຖືກແຕ່ງຕັ້ງຄືນໃໝ່ໄດ້.

**ມາດຕາ 15 ເງື່ອນໄຂຂອງສະມາຊິກສະພາບໍລິຫານ**

ສະມາຊິກສະພາບໍລິຫານມີເງື່ອນໄຂຕົ້ນຕໍ ດັ່ງນີ້:

1. ມີ*ຄວາມຮູ້*, ຄວາມສາມາດ ແລະ ຄຸນສົມບັດ *ທີ່ເໝາະສົມ*;
2. *ບໍ່ດຳລົງຕຳແໜ່ງ*ສະມາຊິກຂອງສະພາບໍລິຫານ ຫຼື ຜູ້ອຳນວຍການຂອງສະຖາບັນການເງິນໃດໜຶ່ງ;

3. ຜົວ ຫຼື ເມຍ, ພໍ່, ແມ່, ລູກບໍ່ແມ່ນຜູ້ຖືຮຸ້ນລາຍໃຫຍ່ ຫຼື ຜູ້ມີສິດຜົນປະໂຫຍດສໍາຄັນໃນສະຖາບັນການເງິນໃດໜຶ່ງ;

4. ບໍ່ເປັນບຸກຄົນລົ້ມລະລາຍ ຫຼື ເຄີຍເປັນຜູ້ບໍລິຫານຂອງວິສາຫະກິດທີ່ຖືກລົ້ມລະລາຍ;

5. ບໍ່ເຄີຍຖືກສານຕັດສິນລົງໂທດທາງອາຍາໃນສະຖານລັກຊັບ, ສໍ້ໂກງຊັບ, ຍັກຍອກຊັບ, ປອມແປງເອກະສານ, ສໍ້ລາດບັງຫຼວງ ແລະ ຟອກເງິນ.

## ມາດຕາ 16 ສິດ ແລະ ໜ້າທີ່ ຂອງສະພາບໍລິຫານ

ສະພາບໍລິຫານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າແຜນນະໂຍບາຍເງິນຕາ ຕາມການສະເໜີຂອງຜູ້ວ່າການ ເພື່ອສະເໜີຕໍ່ລັດຖະບານ ແລະ ສະພາແຫ່ງຊາດຮັບຮອງ;

2. ຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານປະຈໍາປີ ແລະ ແຜນການເຄື່ອນໄຫວໃນປີຕໍ່ໄປຂອງທະນາຄານແຫ່ງ ສປປ ລາວ;

3. ຮັບຮອງນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ;

4. ຮັບຮອງເອົາ ບົດສະຫຼຸບການປະຕິບັດງົບປະມານປະຈໍາປີ ແລະ ແຜນງົບປະມານໃນປີຕໍ່ໄປ ຂອງທະນາຄານແຫ່ງ ສປປ ລາວ;

5. ແບ່ງປັນຜົນໄດ້ຮັບສຸດທິປະຈໍາປີ ເຂົ້າຄັງຂະຫຍາຍການຜະລິດ, ຄັງສໍາຮອງທົ່ວໄປ ແລະ ແບ່ງແກ້ໄຂຂາດທຶນສະສົມ.

6. ຄົ້ນຄວ້າພິຈາລະນາໂຄງປະກອບກົງຈັກຂັ້ນກົມ, ທຽບເທົ່າກົມ ແລະ ແຜນການປະກອບບຸກຄະລາກອນຂອງທະນາຄານແຫ່ງ ສປປ ລາວ;

7. ແຕ່ງຕັ້ງ ແລະ ປັບປຸງ ຄະນະກໍາມະການນະໂຍບາຍເງິນຕາ ແລະ ຄະນະກໍາມະການອື່ນ ຕາມການສະເໜີຂອງຜູ້ວ່າການ;

8. ປະຕິບັດໜ້າທີ່ອື່ນ ຕາມທີ່ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

## ມາດຕາ 17 ກອງປະຊຸມສະພາບໍລິຫານ

ສະພາບໍລິຫານເຄື່ອນໄຫວວຽກງານຂອງຕົນຕາມລະບອບປະຊຸມ. ກອງປະຊຸມສະພາບໍລິຫານປະກອບດ້ວຍກອງປະຊຸມສະໄໝສາມັນ ແລະ ວິສາມັນ.

ກອງປະຊຸມສະພາບໍລິຫານສະໄໝສາມັນ ຈັດຂຶ້ນຢ່າງໜ້ອຍສອງຄັ້ງຕໍ່ປີ ຕາມການຮຽກໂຮມຂອງປະທານ ຫຼື ຕາມການສະເໜີຂອງສະມາຊິກສະພາບໍລິຫານຢ່າງໜ້ອຍສອງຄົນ. ກອງປະຊຸມສະພາບໍລິຫານ ຕ້ອງແຈ້ງໃຫ້ສະມາຊິກສະພາບໍລິຫານຊາບລ່ວງໜ້າເປັນລາຍລັກອັກສອນຢ່າງໜ້ອຍເຈັດວັນກ່ອນວັນເປີດກອງປະຊຸມ. ກອງປະຊຸມສະພາບໍລິຫານຈະສາມາດເປີດຂຶ້ນໄດ້ກໍຕໍ່ເມື່ອມີສະມາຊິກສະພາບໍລິຫານເຂົ້າຮ່ວມຫຼາຍກວ່າເຄິ່ງໜຶ່ງ ຂອງຈໍານວນສະມາຊິກທັງໝົດ.

ກອງປະຊຸມສະພາບໍລິຫານສະໄໝວິສາມັນ ສາມາດຈັດຂຶ້ນເວລາໃດກໍໄດ້ ຕາມຄວາມຈໍາເປັນຂອງວຽກງານ ໂດຍການຮຽກໂຮມຂອງປະທານ ຫຼື ສະມາຊິກສະພາບໍລິຫານຢ່າງໜ້ອຍສອງຄົນ.

ກອງປະຊຸມສະພາບໍລິຫານຕົກລົງບັນຫາ ໂດຍຖືເອົາສຽງສ່ວນຫຼາຍຂອງສະມາຊິກທີ່ເຂົ້າຮ່ວມກອງປະຊຸມ. ກໍລະນີຫາກມີສຽງເທົ່າກັນ ສຽງຂອງປະທານເປັນອັນຕັດສິນ.

**ມາດຕາ 18 ການພົ້ນຈາກຕໍາແໜ່ງຂອງສະມາຊິກສະພາບໍລິຫານ**

ສະມາຊິກສະພາບໍລິຫານພົ້ນຈາກຕໍາແໜ່ງ ໃນກໍລະນີ ດັ່ງນີ້:

1. ໝົດອາຍຸການ;
2. ເສຍຊີວິດ;
3. ລາອອກ ຫຼື ຖືກປົດຕໍາແໜ່ງ *ຊຶ່ງກໍລະນີ*ລາອອກຕ້ອງໄດ້ຮັບອະນຸຍາດຈາກນາຍົກລັດຖະມົນຕີ.

ກໍລະນີທີ່ຕໍາແໜ່ງຂອງສະມາຊິກສະພາບໍລິຫານຜູ້ໃດໜຶ່ງ*ວ່າງລົງ ຕາມກໍລະນີທີ່ກໍານົດໄວ້ໃນຂໍ້ 2 ແລະ 3 ຂອງມາດຕານີ້* ຊຶ່ງເຮັດໃຫ້ວຽກງານຂອງທະນາຄານ*ແຫ່ງ ສປປ ລາວ*ພົບຄວາມຫຍຸ້ງຍາກນັ້ນ *ຜູ້ວ່າການຕ້ອງສະເໜີນາຍົກລັດຖະມົນຕີແຕ່ງຕັ້ງຜູ້ໃໝ່ແທນ* ເພື່ອສືບຕໍ່ໜ້າທີ່ຕາມອາຍຸການຂອງສະພາບໍລິຫານທີ່ຍັງເຫຼືອ.

## ໝວດທີ 2
## ຜູ້ວ່າການ ແລະ ຮອງຜູ້ວ່າການ

***ມາດຕາ 19 ຜູ້ວ່າການ***

*ຜູ້ວ່າການ* ເປັນສະມາຊິກລັດຖະບານ, *ເປັນຜູ້ຊີ້ນໍາ, ນໍາພາບໍລິຫານວຽກງານຮອບດ້ານພາຍໃນທະນາຄານແຫ່ງ ສປປ ລາວ ທັງເປັນຜູ້ຕາງໜ້າ ຂອງທະນາຄານແຫ່ງ ສປປ ລາວ ໃນການພົວພັນວຽກງານພາຍໃນ ແລະ ຕ່າງປະເທດ.*

**ມາດຕາ 20 ການແຕ່ງຕັ້ງຜູ້ວ່າການ**

ຜູ້ວ່າການຖືກແຕ່ງຕັ້ງ ແລະ ປົດຕໍາແໜ່ງໂດຍປະທານປະເທດ ຕາມການສະເໜີຂອງນາຍົກລັດຖະມົນຕີ ແລະ ຕາມການຮັບຮອງຂອງສະພາແຫ່ງຊາດ.

**ມາດຕາ 21 ສິດ ແລະ ໜ້າທີ່ຂອງຜູ້ວ່າການ**

ຜູ້ວ່າການມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຜິດຊອບຕໍ່ລັດຖະບານ *ແລະ ສະພາບໍລິຫານ*ກ່ຽວກັບວຽກງານເງິນຕາ ແລະ *ສະຖາບັນການເງິນ;*
2. *ຮັບຜິດຊອບກວດກາທຸກບັນຫາ ເພື່ອນໍາສະເໜີຕໍ່ສະພາບໍລິຫານ ແລະ ຊີ້ນໍາການຈັດຕັ້ງປະຕິບັດມະຕິຂອງສະພາບໍລິຫານ;*
3. *ສະເໜີແຜນນະໂຍບາຍເງິນຕາໃຫ້ແກ່ລັດຖະບານ ເພື່ອສະເໜີສະພາແຫ່ງຊາດພິຈາລະນາຮັບຮອງ;*
4. *ພິຈາລະນາຮັບຮອງເຄື່ອງມືນະໂຍບາຍເງິນຕາ ທີ່ເໝາະສົມກັບສະພາບເສດຖະກິດ ໃນແຕ່ລະໄລຍະ;*
5. *ອະນຸມັດຈໍານວນລວມຂອງທະນະບັດ ແລະ ເງິນຫຼຽນ ທີ່ຈະພິມຈໍາໜ່າຍ, ຖອນ ແລະ ທໍາລາຍໃນແຕ່ລະປີ;*
6. *ສະເໜີສ້າງ ແລະ ປັບປຸງຮ່າງກົດໝາຍ, ລັດຖະບັນຍັດ ແລະ ດໍາລັດ ກ່ຽວກັບວຽກງານຂອງຂະແໜງການທະນາຄານ ຕໍ່ລັດຖະບານ;*
7. *ອອກ, ປັບປຸງ ແລະ ຍົກເລີກ ນິຕິກໍາ ຕາມຂອບເຂດສິດຂອງຕົນ;*

8. ອອກ, ຖອນໃບອະນຸຍາດດຳເນີນທຸລະກິດ ແລະ ໂຈະຊົ່ວຄາວການດຳເນີນທຸລະກິດຂອງສະຖາບັນການເງິນ, ຫ້ອງການຜູ້ຕາງໜ້າ ຫຼື ສາຂາຂອງທະນາຄານຕ່າງປະເທດ ແລະ ຫ້ອງການຜູ້ຕາງໜ້າ ຫຼື ສາຂາ ຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ;

9. ອະນຸມັດການສ້າງຕັ້ງ ແລະ ປັບປຸງ ກົງຈັກການຈັດຕັ້ງຂັ້ນພະແນກ ແລະ ທຽບເທົ່າພະແນກ ລົງມາ;

10. ສະເໜີນາຍົກລັດຖະມົນຕີ ເພື່ອແຕ່ງຕັ້ງ ແລະ ປົດຕຳແໜ່ງ ສະມາຊິກສະພາບໍລິຫານ, ຮອງຜູ້ວ່າການ, ຫົວໜ້າກົມ ແລະ ທຽບເທົ່າຫົວໜ້າກົມ;

11. ແຕ່ງຕັ້ງ, ຍົກຍ້າຍ ແລະ ປົດຕຳແໜ່ງຮອງຫົວໜ້າກົມ, ທຽບເທົ່າຮອງຫົວໜ້າກົມ, ຫົວໜ້າພະແນກ, ຮອງຫົວໜ້າພະແນກ ລົງມາ ພ້ອມທັງບັນຈຸພະນັກງານວິຊາການຂອງທະນາຄານແຫ່ງ ສປປ ລາວ;

12. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ, ລະບຽບການ ຫຼື ຕາມການມອບໝາຍຂອງລັດຖະບານ.

**ມາດຕາ 22 ຮອງຜູ້ວ່າການ**

ທະນາຄານແຫ່ງ ສປປ ລາວ ປະກອບມີຮອງຜູ້ວ່າການຈຳນວນໜຶ່ງ ຊຶ່ງຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງຜູ້ວ່າການ.

ຮອງຜູ້ວ່າການ ມີໜ້າທີ່ຊ່ວຍຜູ້ວ່າການໃນການຊີ້ນຳ ແລະ ນຳພາລົງເລິກວຽກງານຈຳນວນໜຶ່ງ ຕາມການມອບໝາຍຂອງຜູ້ວ່າການ ທັງເປັນຜູ້ຮັກສາການແທນ ໃນກໍລະນີທີ່ຜູ້ວ່າການ ຕິດຂັດ ແລະ ບໍ່ສາມາດມາປະຈຳການໄດ້ ຕາມການມອບໝາຍຂອງຜູ້ວ່າການ.

## ໝວດທີ 3
## ຄະນະກຳມະການຕ່າງໆ

**ມາດຕາ 23 ຄະນະກຳມະການຕ່າງໆ**

ທະນາຄານແຫ່ງ ສປປ ລາວ ປະກອບມີຄະນະກຳມະການ ຈຳນວນໜຶ່ງ ດັ່ງນີ້:

1. ຄະນະກຳມະການນະໂຍບາຍເງິນຕາ;
2. ຄະນະກຳມະການກວດກາພາຍໃນ;
3. ຄະນະກຳມະການອື່ນ ຕາມຄວາມຈຳເປັນຂອງວຽກງານ.

**ມາດຕາ 24 ຄະນະກຳມະການນະໂຍບາຍເງິນຕາ**

ຄະນະກຳມະການນະໂຍບາຍເງິນຕາ ແມ່ນໂຄງປະກອບກົງຈັກໜຶ່ງຂອງທະນາຄານແຫ່ງ ສປປ ລາວ, ຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງ ໂດຍສະພາບໍລິຫານ ຕາມການສະເໜີຂອງຜູ້ວ່າການ.

ຄະນະກຳມະການນະໂຍບາຍເງິນຕາ ມີພາລະບົດບາດໃນການຄົ້ນຄວ້າທິດທາງ, ຫຼັກການ, ລະບຽບການ ແລະ ມາດຕະການຄຸ້ມຄອງມະຫາພາກທາງດ້ານເງິນຕາ ເພື່ອໃຫ້ເງິນຕາແຫ່ງຊາດມີສະຖຽນລະພາບ ແລະ ດັດສົມເສດຖະກິດ ເງິນຕາຂອງຊາດ.

ຄະນະກຳມະການນະໂຍບາຍເງິນຕາ ເຄື່ອນໄຫວວຽກງານຂອງຕົນຕາມລະບອບປະຊຸມ ຊຶ່ງກອງປະຊຸມສະໄໝສາມັນຈັດຂຶ້ນ ສອງ ເດືອນ ຕໍ່ຄັ້ງ. ໃນກໍລະນີຈຳເປັນຮີບດ່ວນ ສາມາດຈັດກອງປະຊຸມສະໄໝວິສາມັນໄດ້.

ການດຳເນີນກອງປະຊຸມ ແລະ ການລົງມະຕິ ໃຫ້ປະຕິບັດຄືກັນກັບກອງປະຊຸມສະພາບໍລິຫານ ຕາມທີ່ກຳນົດໄວ້ໃນມາດຕາ 17 ຂອງກົດໝາຍສະບັບນີ້. ໃນກໍລະນີຈຳເປັນ ຄະນະກຳມະການນະໂຍບາຍເງິນຕາ ສາມາດເຊີນບຸກຄົນ ຫຼື ພາກສ່ວນກ່ຽວຂ້ອງ ເຂົ້າຮ່ວມກອງປະຊຸມໄດ້ ແຕ່ຜູ້ເຂົ້າຮ່ວມດັ່ງກ່າວ ບໍ່ສາມາດລົງຄະແນນສຽງ.

**ມາດຕາ 25 ໂຄງປະກອບຂອງຄະນະກຳມະການນະໂຍບາຍເງິນຕາ**

ຄະນະກຳມະການນະໂຍບາຍເງິນຕາ ປະກອບດ້ວຍສະມາຊິກ ຢ່າງໜ້ອຍ ເກົ້າ ຄົນ ດັ່ງນີ້:

1. ຜູ້ວ່າການ ເປັນປະທານ;
2. ຮອງຜູ້ວ່າການ ເປັນຮອງປະທານ;
3. ຕົວແທນຈາກກະຊວງການເງິນ ເປັນຮອງປະທານ;
4. ກຳມະການຈຳນວນໜຶ່ງ ທີ່ມາຈາກທະນາຄານແຫ່ງ ສປປ ລາວກະຊວງ , ແລະ ຂະແໜງການ ທີ່ກ່ຽວຂ້ອງກັບການຄົ້ນຄວ້ານະໂຍບາຍເງິນຕາ.

**ມາດຕາ 26 ສິດ ແລະ ໜ້າທີ່ຂອງຄະນະກຳມະການນະໂຍບາຍເງິນຕາ**

ຄະນະກຳມະການນະໂຍບາຍເງິນຕາມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງແຜນນະໂຍບາຍເງິນຕາ ໃຫ້ແກ່ຜູ້ວ່າການພິຈາລະນາ;
2. ຄົ້ນຄວ້າເຄື່ອງມືນະໂຍບາຍເງິນຕາທີ່ເໝາະສົມ ເພື່ອສະເໜີຜູ້ວ່າການພິຈາລະນາຮັບຮອງ ແລະ ນຳໃຊ້ໃນແຕ່ລະໄລຍະ;
3. ຕິດຕາມ, ກວດກາ ແລະ ປະເມີນ ການຈັດຕັ້ງປະຕິບັດນະໂຍບາຍເງິນຕາ ຂອງທະນາຄານແຫ່ງ ສປປ ລາວ;
4. ຄົ້ນຄວ້າມີຄຳເຫັນຕໍ່ການສ້າງ ແລະ ປັບປຸງນິຕິກຳ ກ່ຽວກັບການຈັດຕັ້ງປະຕິບັດນະໂຍບາຍເງິນຕາ ເພື່ອສະເໜີຜູ້ວ່າການພິຈາລະນາ;
5. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງຜູ້ວ່າການ.

## ໝວດທີ 4
## ກົງຈັກຊ່ວຍວຽກ ແລະ ພະນັກງານ

**ມາດຕາ 27 ກົງຈັກຊ່ວຍວຽກ**

ທະນາຄານແຫ່ງ ສປປ ລາວ ປະກອບມີ ກົມ, ທຽບເທົ່າກົມ ຢູ່ຂັ້ນສູນກາງ ແລະ ສາຂາຢູ່ຂັ້ນທ້ອງຖິ່ນ. ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົງຈັກດັ່ງກ່າວ ແມ່ນປະຕິບັດຕາມລະບຽບການສະເພາະ.

**ມາດຕາ 28 ພະນັກງານຂອງທະນາຄານແຫ່ງ ສປປ ລາວ**

ພະນັກງານຂອງທະນາຄານແຫ່ງ ສປປ ລາວ ມີຖານະເປັນພະນັກງານ ລັດຖະກອນ, ເຄື່ອນໄຫວວຽກງານ, ປະຕິບັດສິດ, ໜ້າທີ່, ພັນທະ ແລະ ອື່ນໆ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍພະນັກງານ ລັດຖະກອນ ແລະ ລະບຽບການທີ່ກ່ຽວຂ້ອງ.

ພະນັກງານຂອງທະນາຄານແຫ່ງ ສປປ ລາວ ໄດ້ຮັບເງິນເດືອນ, ເງິນແຮງງານ, ນະໂຍບາຍອຸດໜູນ ແລະ ສະຫວັດດີການຕ່າງໆ ຕາມລະບຽບການສະເພາະ ທີ່ທະນາຄານແຫ່ງ ສປປ ລາວ ວາງອອກ.

## ພາກທີ IV
## ການເຄື່ອນໄຫວວຽກງານ
### ໝວດທີ 1
### ຍຸດທະສາດການພັດທະນາລະບົບສະຖາບັນການເງິນ ເງິນຕາ

**ມາດຕາ 29 ຍຸດທະສາດການພັດທະນາລະບົບສະຖາບັນການເງິນ ເງິນຕາ**

ຍຸດທະສາດການພັດທະນາລະບົບສະຖາບັນການເງິນ ເງິນຕາ ແມ່ນການກຳນົດວິໄສທັດ ໄລຍະ ສິບຫ້າປີ, ແຜນຍຸດທະສາດການພັດທະນາລະບົບສະຖາບັນການເງິນ ເງິນຕາ ໄລຍະ ສິບປີ ແລະ ແຜນງານ, ໂຄງການໃນການພັດທະນາໄລຍະ ຫ້າປີ ໂດຍສອດຄ່ອງກັບນະໂຍບາຍ, ວິໄສທັດ ແລະ ຍຸດທະສາດການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

ພັດທະນາພື້ນຖານໂຄງລ່າງເຕັກໂນໂລຊີບໍລິການ ໃຫ້ມີຄວາມທັນສະໄໝ ແລະ ການດຳເນີນທຸລະກິດຂອງສະຖາບັນການເງິນ ເງິນຕາ ໃຫ້ມີຄວາມໝັ້ນຄົງ ໂປ່ງໃສ, ສົ່ງເສີມການເຂົ້າເຖິງການບໍລິການທາງດ້ານການເງິນ, ຮັກສາສະຖຽນລະພາບເງິນຕາແຫ່ງຊາດ ແລະ ຮັບປະກັນຄວາມກົມກຽວກັບຂະແໜງການອື່ນ.

**ມາດຕາ 30 ເນື້ອໃນຂອງແຜນຍຸດທະສາດການພັດລະບົບສະຖາບັນການເງິນ ເງິນຕາ**

ເນື້ອໃນແຜນຍຸດທະສາດພັດທະນາລະບົບສະຖາບັນການເງິນ ເງິນຕາ ມີດັ່ງນີ້:

1. ສະຫຼຸບສັງລວມສະພາບການພັດທະນາລະບົບສະຖາບັນການເງິນ ເງິນຕາ ໃນໄລຍະຜ່ານມາ ພ້ອມດ້ວຍການຕີລາຄາດ້ານດີ, ຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້;
2. ກຳນົດທິດທາງລວມ, ຄາດໝາຍສູ້ຊົນ ແລະ ຕົວຊີ້ວັດຕົ້ນຕໍ ສຳລັບການພັດທະນາລະບົບສະຖາບັນການເງິນ ເງິນຕາ;
3. ກຳນົດນະໂຍບາຍ ແລະ ລະບຽບການ ເພື່ອຄຸ້ມຄອງ ແລະ ພັດທະນາລະບົບສະຖາບັນການເງິນ ເງິນຕາ;
4. ພັດທະນາລະບົບສະຖາບັນການເງິນ ເງິນຕາ ແຕ່ລະຮູບແບບ ແລະ ສ້າງ, ປັບປຸງ ນິຕິກຳ ທີ່ໃຊ້ໃນການຄຸ້ມຄອງ, ຕິດຕາມກວດກາລະບົບສະຖາບັນການເງິນ ເງິນຕາ ຕາມຄວາມສ່ຽງ;
5. ສ້າງຄວາມເຂັ້ມແຂງໃຫ້ອົງການຄຸ້ມຄອງວຽກງານລະບົບສະຖາບັນການເງິນ ເງິນຕາ ດ້ວຍການສ້າງບຸກຄະລາກອນ, ສ້າງລະບົບກົນໄກ ແລະ ວິທີການຄຸ້ມຄອງສະຖາບັນການເງິນ ເງິນຕາ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;
6. ສ້າງກົນໄກການປະສານງານ ລະຫວ່າງ ຂະແໜງການທີ່ກ່ຽວຂ້ອງ ກ່ຽວກັບການຄຸ້ມຄອງ, ຕິດຕາມ ແລະ ກວດກາ ໃຫ້ມີຄວາມຄ່ອງຕົວ;
7. ກຳນົດມາດຕະການ, ວິທີການ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ຍຸດທະສາດການພັດທະນາສະຖາບັນການເງິນ ເງິນຕາ ໃນແຕ່ລະໄລຍະ.

## *ໝວດທີ 2*
## *ເງິນຕາແຫ່ງຊາດ*

**ມາດຕາ 31 ເງິນຕາຂອງ ສປປ ລາວ**

ເງິນຕາຂອງ ສປປ ລາວ ແມ່ນເງິນກີບ ຊຶ່ງມີເຄື່ອງໝາຍພາສາລາວ "ກີບ" *ແລະ ມີເຄື່ອງໝາຍເປັນອັກສອນລາແຕັງ "LAK"*. ໜຶ່ງກີບແບ່ງອອກເປັນ ຮ້ອຍອັດ.

**ມາດຕາ 32 ຄວາມສາມາດຊື້ຕາມກົດໝາຍ*ຂອງ ເງິນກີບ***

*ເງິນກີບ ບໍ່ວ່າຈະເປັນ*ທະນະບັດ ແລະ ເງິນຫຼຽນ ທີ່ທະນາຄານແຫ່ງ ສປປ ລາວ ພິມຈຳໜ່າຍສູ່ຂອດຈໍລະຈອນ ແມ່ນຖືກຕ້ອງຕາມກົດໝາຍ ແລະ ມີຄວາມສາມາດຊື້ໃນທົ່ວດິນແດນຂອງ ສປປ ລາວ. ທະນະບັດແຕ່ລະໃບ ເງິນຫຼຽນແຕ່ລະອັນ ຕ້ອງກຳນົດມູນຄ່າຢ່າງຈະແຈ້ງ.

**ມາດຕາ 33 ການພິມທະນະບັດ ແລະ ຫຼໍ່ເງິນຫຼຽນ**

ທະນາຄານແຫ່ງ ສປປ ລາວ *ເປັນຜູ້ອອກແບບ*, ກຳນົດສ່ວນປະກອບ, ຮູບພາບ ແລະ *ປະເພດ*ທະນະບັດ ແລະ ເງິນຫຼຽນ *ເພື່ອສະເໜີລັດຖະບານພິຈາລະນາອະນຸມັດການພິມທະນະບັດ ຫຼື ຫຼໍ່ເງິນຫຼຽນ.*

*ການພິມທະນະບັດ ແລະ ຫຼໍ່ເງິນຫຼຽນ ຕ້ອງສອດຄ່ອງກັບສະພາບເສດຖະກິດຂອງປະເທດ ພ້ອມທັງຄຸ້ມຄອງ ສາງ, ທະນະບັດ ແລະ ເງິນຫຼຽນທີ່ຍັງບໍ່ທັນໄດ້ນຳອອກສູ່ຂອດຈໍລະຈອນ ໃຫ້ມີຄວາມປອດໄພ.*

***ມາດຕາ 34 ການພິມທະນະບັດ ແລະ ຫຼໍ່ຫຼຽນ ທີ່ລະນຶກ***

*ທະນາຄານແຫ່ງ ສປປ ລາວ ສາມາດພິມທະນະບັດ ຫຼື ຫຼໍ່ຫຼຽນ ທີ່ລະນຶກ ເນື່ອງໃນໂອກາດການສະເຫຼີມສະຫຼອງວັນສຳຄັນທາງດ້ານການເມືອງ, ປະຫວັດສາດ, ວິທະຍາສາດ, ວັດທະນະທຳ ສັງຄົມ ຫຼື ເຫດການສຳຄັນຂອງຊາດ ຕາມການອະນຸມັດຂອງລັດຖະບານ.*

***ມາດຕາ 35 ການຄຸ້ມຄອງແມ່ພິມທະນະບັດ ແລະ ເບົ້າຫຼໍ່ເງິນຫຼຽນ***

*ທະນາຄານແຫ່ງ ສປປ ລາວ ຕ້ອງເກັບຮັກສາແມ່*ພິມທະນະບັດ, ເບົ້າຫຼໍ່ເງິນຫຼຽນ, *ປັ້ເລກລະຫັດ ແລະ ເຄື່ອງມືອື່ນໆ ທີ່ນຳໃຊ້ໃນການພິມທະນະບັດ ຫຼື ຫຼໍ່ເງິນຫຼຽນ ໃຫ້ມີຄວາມປອດໄພດີ. ຖ້າມີຄວາມຈຳເປັນກໍໃຫ້ທຳລາຍ.*

***ມາດຕາ 36 ການພິມຈຳໜ່າຍທະນະບັດ ແລະ ເງິນຫຼຽນ***

*ການພິມຈຳໜ່າຍທະນະບັດ ຫຼື ເງິນຫຼຽນ ແມ່ນການນຳເອົາທະນະບັດ ແລະ ເງິນຫຼຽນ ອອກສູ່ຂອດຈໍລະຈອນ.*

**ມາດຕາ 37 ຄວາມຮັບຜິດຊອບກ່ຽວກັບການເຄື່ອນຍ້າຍທະນະບັດ *ແລະ ເງິນຫຼຽນ* (ມາດຕາ 28 ເກົ່າ)**

ທະນາຄານແຫ່ງ ສປປ ລາວ ຈະຮັບຜິດຊອບໃຊ້ແທນຄ່າເສຍຫາຍກ່ຽວກັບການເຄື່ອນຍ້າຍທະນະບັດ ແລະ ເງິນຫຼຽນ ກໍຕໍ່ເມື່ອການເຄື່ອນຍ້າຍທະນະບັດ ແລະ ເງິນຫຼຽນນັ້ນ ຫາກນອນຢູ່ໃນຄວາມຮັບຜິດຊອບຂອງຕົນ.

**ມາດຕາ 38 ການຖອນ*ທະນະບັດ ແລະ ເງິນຫຼຽນ*ຄືນຈາກການຈໍລະຈອນ (ມາດຕາ 26 ເກົ່າ)**

ທະນາຄານແຫ່ງ ສປປ ລາວ ສາມາດຖອນທະນະບັດ ແລະ ເງິນຫຼຽນ *ອອກຈາກຂອດຈໍລະຈອນ* ໂດຍໄດ້ຮັບ*ການ*ເຫັນດີຈາກລັດຖະບານ. ການຖອນ*ທະນະບັດ ແລະ ເງິນຫຼຽນ*ນັ້ນ ຕ້ອງແຈ້ງໃຫ້ມວນຊົນຊາບ. ຜູ້ທີ່ມີທະນະບັດ ຫຼື ເງິນຫຼຽນທີ່ຖືກປະກາດຖອນຄືນຈາກການຈໍລະຈອນນັ້ນ ມີສິດປ່ຽນເອົາ*ທະນະບັດ ຫຼື ເງິນຫຼຽນ* ນໍາທະນາຄານແຫ່ງ ສປປ ລາວ *ແລະ ທະນາຄານທຸລະກິດ ຕາມມູນຄ່າຂອງທະນະບັດ ແລະ ເງິນຫຼຽນທີ່ ຕົນຖືຄອງ.* ໃນການປ່ຽນ*ທະນະບັດ ຫຼື ເງິນຫຼຽນ*ນີ້ບໍ່ໃຫ້ເກັບຄ່າບໍລິການ.

**ມາດຕາ 39 ການແລກປ່ຽນ*ທະນະບັດ ແລະ ເງິນຫຼຽນ*ເສື່ອມຄຸນນະພາບ (ມາດຕາ 27 ເກົ່າ)**

*ທະນາຄານແຫ່ງ ສປປ ລາວ ເປັນຜູ້ກໍານົດ ມາດຕະຖານ ແລະ ເງື່ອນໄຂການແລກປ່ຽນ ທະນະບັດ ແລະ ເງິນຫຼຽນ ເສື່ອມຄຸນນະພາບ ເຊັ່ນ ຖືກເຈາະ, ຖືກຕັດ, ແຕກ, ຫັກ, ມີຮອຍຂີດຂຽນ, ບໍ່ມີຄຸນລັກສະນະຂອງເງິນ ຫຼື ມີຮູບພາບທີ່ບໍ່ສາມາດຈໍາແນກໄດ້.*

*ການປ່ຽນເງິນເສື່ອມຄຸນນະພາບ ສາມາດດໍາເນີນຜ່ານທະນາຄານທຸລະກິດ ຫຼື ທະນາຄານແຫ່ງ ສປປ ລາວ ກໍໄດ້.* ເງື່ອນໄຂຂອງການປ່ຽນນັ້ນຕ້ອງປະກາດໃຫ້ມວນຊົນຊາບ.

***ມາດຕາ 40 ການທໍາລາຍທະນະບັດ ແລະ ເງິນຫຼຽນ***

*ທະນາຄານແຫ່ງ ສປປ ລາວ ເປັນຜູ້ທໍາລາຍທະນະບັດ ແລະ ເງິນຫຼຽນ ທີ່ຖອນຄືນຈາກຂອດຈໍລະຈອນຕາມທີ່ກໍານົດໄວ້ໃນມາດຕາ 38 ແລະ 39. ການຈັດຕັ້ງປະຕິບັດຕ້ອງຮັບປະກັນຄວາມປອດໄພຮອບດ້ານ.*

*ຂັ້ນຕອນ ແລະ ວິທີການຈັດຕັ້ງປະຕິບັດ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.*

## *ໝວດ 3*
## *ການປະຕິບັດນະໂຍບາຍເງິນຕາ*

### *ກ. ນະໂຍບາຍເງິນຕາ*

***ມາດຕາ 41 ນະໂຍບາຍເງິນຕາ***

*ນະໂຍບາຍເງິນຕາ ແມ່ນການນໍາໃຊ້ເຄື່ອງມືນະໂຍບາຍເງິນຕາທີ່ເໝາະສົມ ເພື່ອຄວບຄຸມປະລິມານເງິນແນໃສ່ຮັກສາສະຖຽນລະພາບທາງດ້ານລາຄາ.*

***ມາດຕາ 42 ເຄື່ອງມືນະໂຍບາຍເງິນຕາ***

*ເຄື່ອງມືນະໂຍບາຍເງິນຕາ ປະກອບດ້ວຍ:*

1. *ການສະໜອງທຶນ;*
2. *ອັດຕາດອກເບ້ຍ;*

*3. ອັດຕາແລກປ່ຽນ;*

*4. ເງິນແຮຝາກບັງຄັບ;*

*5. ການດຳເນີນຕະຫຼາດເປີດ;*

*6. ເຄື່ອງມືອື່ນຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ.*

*ທະນາຄານແຫ່ງ ສປປ ລາວ ເປັນຜູ້ກຳນົດກົນໄກ ແລະ ລະບຽບການ ໃນການນຳໃຊ້ເຄື່ອງມືນະໂຍບາຍເງິນຕາແຕ່ລະປະເພດ.*

***ມາດຕາ 43 ການສະໜອງທຶນ***

*ການສະໜອງທຶນ ແມ່ນການໃຫ້ກູ້ຢືມຂອງທະນາຄານແຫ່ງ ສປປ ລາວ ແກ່ສະຖາບັນການເງິນ ເພື່ອແກ້ໄຂສະພາບຄ່ອງໄລຍະສັ້ນ.*

*ການສະໜອງທຶນສາມາດຈັດຕັ້ງປະຕິບັດ ໃນຮູບການ ດັ່ງນີ້:*

*1. ໃຫ້ກູ້ຢືມໂດຍມີຫຼັກຊັບຄ້ຳປະກັນ ດ້ວຍເອກະສານມີຄ່າ;*

*2. ໃຫ້ກູ້ຢືມໂດຍບໍ່ມີຫຼັກຊັບຄ້ຳປະກັນ;*

*3. ຊື້ຂາດ, ຮັບຊ່ວງຊື້ເອກະສານມີຄ່າ;*

*4. ການສະໜອງທຶນຮູບການອື່ນ.*

**ມາດຕາ 44 ອັດຕາດອກເບ້ຍ (ມາດຕາ 39 ເກົ່າ)**

ທະນາຄານແຫ່ງ ສປປ ລາວ ເປັນຜູ້ກຳນົດ ແລະ ປະກາດໃຊ້ ອັດຕາດອກເບ້ຍພື້ນຖານ, ອັດຕາດອກເບ້ຍສະໜອງທຶນ ແລະ ອັດຕາດອກເບ້ຍເງິນກູ້ລະຫວ່າງທະນາຄານ *ເພື່ອຈັດຕັ້ງປະຕິບັດນະໂຍບາຍເງິນຕາ*. ສ່ວນການກຳນົດອັດຕາດອກເບ້ຍເງິນຝາກ ແລະ ເງິນກູ້ ຂອງສະຖາບັນການເງິນ ໃຫ້ລູກຄ້າທົ່ວໄປ ແມ່ນປະຕິບັດ ຕາມກົນໄກເສດຖະກິດຕະຫຼາດ ທີ່ມີການຄຸ້ມຄອງຂອງລັດ.

***ມາດຕາ 45 ອັດຕາແລກປ່ຽນ***

*ອັດຕາແລກປ່ຽນ ລະຫວ່າງສະກຸນເງິນກີບ ກັບ ເງິນຕາຕ່າງປະເທດ ແມ່ນກຳນົດບົນພື້ນຖານການສະໜອງ ແລະ ຄວາມຕ້ອງການເງິນຕາຕ່າງປະເທດ ຂອງປະເທດ ທີ່ມີການຄຸ້ມຄອງຂອງລັດ.*

*ທະນາຄານແຫ່ງ ສປປ ລາວ ເປັນຜູ້ກຳນົດ ລະບອບ, ກົນໄກການຄຸ້ມຄອງ ແລະ ອັດຕາແລກປ່ຽນອ້າງອີງ.*

**ມາດຕາ 46 ເງິນແຮຝາກບັງຄັບ (ມາດຕາ 40 ເກົ່າ)**

ເງິນແຮຝາກບັງຄັບ ແມ່ນຈຳນວນເງິນຕ່ຳສຸດທີ່ທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ຮັບເງິນຝາກ ຕ້ອງຝາກໄວ້ຢູ່ທະນາຄານ ແຫ່ງ ສປປ ລາວ.

ທະນາຄານແຫ່ງ ສປປ ລາວ ເປັນຜູ້ກຳນົດອັດຕາສ່ວນເງິນແຮຝາກບັງຄັບ ໃຫ້ແກ່ທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ຮັບເງິນຝາກ ແຍກເປັນແຕ່ລະສະກຸນເງິນຝາກ.

*ມາດຕາ 47 ການດຳເນີນຕະຫຼາດເປີດ*

*ຕະຫຼາດເປີດ ແມ່ນຕະຫຼາດແລກປ່ຽນຊື້, ຂາຍ ເອກະສານມີຄ່າ ລະຫວ່າງທະນາຄານແຫ່ງ ສປປ ລາວ ແລະ ສະຖາບັນການເງິນ ເພື່ອຄຸ້ມຄອງປະລິມານເງິນ.*

*ທະນາຄານແຫ່ງ ສປປ ລາວ ເປັນຜູ້ຈັດຕັ້ງ, ດຳເນີນ ແລະ ຄຸ້ມຄອງ ການເຄື່ອນໄຫວຕະຫຼາດເປີດ ລວມທັງ ກຳນົດປະເພດເອກະສານມີຄ່າທີ່ສາມາດຊື້, ຂາຍໃນຕະຫຼາດ ແລະ ດຳເນີນການຊື້, ຂາຍ ໃນຕະຫຼາດຮ່ວມກັບສະມາຊິກຂອງຕະຫຼາດເປີດ.*

## *ຂ. ການກູ້ຢືມ ແລະ ໃຫ້ກູ້ຢືມ ຂອງທະນາຄານແຫ່ງ ສປປ ລາວ*

*ມາດຕາ 48 ການກູ້ຢືມ*

*ທະນາຄານແຫ່ງ ສປປ ລາວ ສາມາດກູ້ຢືມເປັນເງິນຕາຕ່າງປະເທດ ເພື່ອຈຸດປະສົງຮັກສາສະຖຽນລະພາບເງິນຕາແຫ່ງຊາດ ຕາມການເຫັນດີຂອງລັດຖະບານ.*

**ມາດຕາ 49 ການໃຫ້ກູ້ຢືມແກ່ລັດຖະບານ**

ທະນາຄານແຫ່ງ ສປປ ລາວ ໃຫ້ກູ້ຢືມແກ່ລັດຖະບານ *ເພື່ອແກ້ໄຂການຂາດດຸນງົບປະມານໄລຍະສັ້ນ ຕາມການເຫັນດີຂອງນາຍົກລັດຖະມົນຕີ. ການກູ້ຢືມດັ່ງກ່າວ ຕ້ອງຊຳລະຄືນພາຍໃນສົກປີງົບປະມານທີ່ກູ້ຢືມ ຍົກເວັ້ນກໍລະນີ ທີ່ໄດ້ຮັບການເຫັນດີຈາກຄະນະປະຈຳສະພາແຫ່ງຊາດ.*

*ມາດຕາ 50 ການໃຫ້ກູ້ຢືມແກ່ສະຖາບັນການເງິນ*

*ທະນາຄານແຫ່ງ ສປປ ລາວ ໃຫ້ກູ້ຢືມໄລຍະສັ້ນແກ່ສະຖາບັນການເງິນ ທີ່ຕົກຢູ່ໃນສະພາບບໍ່ສາມາດຊຳລະສະສາງ ທີ່ອາດສົ່ງຜົນກະທົບຕໍ່ຄວາມໝັ້ນຄົງຂອງລະບົບສະຖາບັນການເງິນ ເງິນຕາ.*

*ການໃຫ້ກູ້ຢືມແກ່ສະຖາບັນການເງິນໃນກໍລະນີອື່ນ ຕາມການເຫັນດີຂອງລັດຖະບານ.*

**ມາດຕາ 51 ການຄ້ຳປະກັນ (ມາດຕາ 43 ເກົ່າ)**

ທະນາຄານແຫ່ງ ສປປ ລາວ ໃຫ້ຄ້ຳປະກັນແກ່ສະຖາບັນການເງິນ, *ອົງການຈັດຕັ້ງ ແລະ ນິຕິບຸກຄົນອື່ນ* ໃນການກູ້ຢືມຈາກຕ່າງປະເທດ ຕາມການເຫັນດີຂອງລັດຖະບານ.

## ຄ. ຄັງສຳຮອງເງິນຕາຕ່າງປະເທດ

**ມາດຕາ 52 ຄັງສຳຮອງເງິນຕາຕ່າງປະເທດ (ມາດຕາ 29, ວັກ 2 ເກົ່າ)**

*ຄັງສຳຮອງເງິນຕາຕ່າງປະເທດ ແມ່ນຊັບສິນເປັນເງິນຕາຕ່າງປະເທດ* ທີ່ປະກອບດ້ວຍ:

1. ເງິນຕາຕ່າງປະເທດ ທີ່ເປັນທະນະບັດ ແລະ ເງິນຫຼຽນ ຫຼື ເງິນຝາກໃນບັນຊີທະນາຄານຕ່າງປະເທດ ດ້ວຍສະກຸນເງິນແຂງໃດໜຶ່ງ ແລະ ຢູ່ໃນປະເທດໃດໜຶ່ງຕາມການຕົກລົງເຫັນດີຂອງສະພາບໍລິຫານ;
2. ສິດຖອນເງິນພິເສດ ເງິນເອສດີອາຣ (SDR), ເງິນສຳຮອງຂອງ ສປປ ລາວ ຢູ່ກອງທຶນສາກົນ;
3. ຄຳ ທີ່ທະນາຄານແຫ່ງ ສປປ ລາວ ຄຸ້ມຄອງ;
4. ພັນທະບັດແລກເງິນ, ໃບສັນຍາໃຊ້ໜີ້, ພັນທະບັດລັດຖະບານ ແລະ ພັນທະບັດອື່ນ ທີ່ອອກຈຳໜ່າຍ ຫຼື ຄ້ຳປະກັນໂດຍລັດຖະບານຕ່າງປະເທດ ຫຼື ສະຖາບັນການເງິນສາກົນ ເປັນເງິນຕາຕ່າງປະເທດສະກຸນໃດ

ໜຶ່ງ ຕາມການຕົກລົງເຫັນດີຂອງສະພາບໍລິຫານ. ເງິນຕາຕ່າງປະເທດດັ່ງກ່າວ ສາມາດຈ່າຍຢູ່ພາຍໃນ ແລະ ນອກ ສປປ ລາວ.

### *ມາດຕາ 53 ການຄຸ້ມຄອງຄັງສຳຮອງເງິນຕາຕ່າງປະເທດ*

ທະນາຄານແຫ່ງ ສປປ ລາວ *ເປັນຜູ້ຄຸ້ມຄອງຄັງສຳຮອງເງິນຕາຕ່າງປະເທດ* ໃຫ້ຢູ່ໃນລະດັບເໝາະສົມ *ຕາມລະບຽບການສະເພາະ ທີ່ລັດຖະບານຮັບຮອງ ເພື່ອຈັດຕັ້ງປະຕິບັດນະໂຍບາຍເງິນຕາ ແລະ ຮັບປະກັນຄວາມສາມາດໃນການຊໍາລະສະສາງກັບຕ່າງປະເທດ. ໃນການບໍລິຫານຄັງສຳຮອງເງິນຕາຕ່າງປະເທດ ທະນາຄານແຫ່ງ ສປປ ລາວ ສາມາດ ຊື້-ຂາຍ ຊັບສິນຕ່າງໆ ທີ່ເປັນອົງປະກອບຂອງຄັງສຳຮອງເງິນຕາຕ່າງປະເທດ ຕາມທີ່ກຳນົດໄວ້ໃນມາດຕາ 52 ຂອງກົດໝາຍສະບັບນີ້. ທະນາຄານແຫ່ງ ສປປ ລາວ* ຕ້ອງລາຍງານສະພາບຄັງສຳຮອງເງິນຕາຕ່າງປະເທດໃຫ້ລັດຖະບານ. ເມື່ອເຫັນວ່າຄັງສຳຮອງເງິນຕາຕ່າງປະເທດຫຼຸດລົງ ຫຼື ມີທ່າອ່ຽງຫຼຸດລົງຜິດປົກກະຕິ ທະນາຄານແຫ່ງ ສປປ ລາວ ຕ້ອງລາຍງານໃຫ້ລັດຖະບານຊາບໂດຍດ່ວນ. ພ້ອມທັງ, ສະເໜີມາດຕະການທີ່ຈຳເປັນເພື່ອແກ້ໄຂສະພາບການດັ່ງກ່າວ ແລະ ສືບຕໍ່ລາຍງານຈົນກວ່າສະພາບການຈະກັບຄືນສູ່ປົກກະຕິ.

## *ໝວດທີ 4*
## *ການຄຸ້ມຄອງສະຖາບັນການເງິນ ແລະ ລະບົບການຊໍາລະ*

### *ມາດຕາ 54 ການຄຸ້ມຄອງສະຖາບັນການເງິນ*

*ທະນາຄານແຫ່ງ ສປປ ລາວ ເປັນຜູ້ຄຸ້ມຄອງສະຖາບັນການເງິນ ໂດຍກຳນົດຍຸດທະສາດ,ແຜນການ, ແຜນງານ, ນິຕິກຳ ແລະ ຈັດຕັ້ງກົງຈັກທີ່ເໝາະສົມຢູ່ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນເພື່ອເຮັດໜ້າທີ່ໃນການຄຸ້ມຄອງ ແລະ ກວດກາສະຖາບັນການເງິນ ເພື່ອຈຸດປະສົງ ດັ່ງນີ້:*

1. *ຮັບປະກັນໃຫ້ລະບົບສະຖາບັນການເງິນມີຄວາມໝັ້ນຄົງ ແລະ ໄດ້ຮັບຄວາມເຊື່ອໝັ້ນ;*
2. *ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ຊົມໃຊ້ທາງດ້ານການເງິນ;*
3. *ຮັບປະກັນໃຫ້ສະຖາບັນການເງິນດຳເນີນທຸລະກິດ ສອດຄ່ອງກັບລະບຽບກົດໝາຍ ແລະ ມີຄວາມໂປ່ງໃສ;*
4. *ຮັບປະກັນປະສິດທິຜົນຂອງວຽກງານຄຸ້ມຄອງ ແລະ ກວດກາສະຖາບັນການເງິນ;*
5. *ຮັບປະກັນສະຖຽນລະພາບຂອງເສດຖະກິດມະຫາພາກ.*

### *ມາດຕາ 55 ວິທີການຄຸ້ມຄອງສະຖາບັນການເງິນ*

*ທະນາຄານແຫ່ງ ສປປ ລາວ ດຳເນີນການຄຸ້ມຄອງ ແລະ ກວດກາການເຄື່ອນໄຫວຂອງສະຖາບັນການເງິນ ຕາມລະບຽບກົດໝາຍ ຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ, ຖ້າຫາກພົບເຫັນການລະເມີດ ລະບຽບກົດໝາຍຂອງບັນດາສະຖາບັນການເງິນ ທະນາຄານແຫ່ງ ສປປ ລາວ ຕ້ອງປະຕິບັດມາດຕະການທີ່ເໝາະສົມ ເພື່ອໃຫ້ສະຖາບັນການເງິນດັ່ງກ່າວດຳເນີນທຸລະກິດ ຕາມວັດຖຸປະສົງ ແລະ ມີຄວາມໝັ້ນຄົງ.*

*ທະນາຄານແຫ່ງ ສປປ ລາວ ສາມາດປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງພາຍໃນປະເທດ ເພື່ອຄຸ້ມຄອງ ແລະ ກວດກາສະຖາບັນການເງິນ ແລະ ຮ່ວມມືກັບອົງການຄຸ້ມຄອງສະຖາບັນການເງິນຢູ່ຕ່າງປະເທດ*

*ເພື່ອກວດກາສາຂາ ຫຼື ບໍລິສັດໃນກຸ່ມຂອງສະຖາບັນການເງິນຂອງ ສປປ ລາວ ຢູ່ຕ່າງປະເທດ ແລະ ສະຖາບັນການເງິນຕ່າງປະເທດຢູ່ ສປປ ລາວ.*

***ມາດຕາ 56 ການຄຸ້ມຄອງລະບົບການຊຳລະ (ມາດຕາ 44 ເກົ່າ)***

ທະນາຄານແຫ່ງ ສປປ ລາວ ເປັນອົງການຄຸ້ມຄອງ ແລະ *ພັດທະນາລະບົບການຊຳລະຢູ່ພາຍໃນປະເທດດ້ວຍການກຳນົດຍຸດທະສາດ, ວາງນະໂຍບາຍ ແລະ ບັນດານິຕິກຳ ທີ່ເໝາະສົມໃນການຄຸ້ມຄອງ, ສ້າງເຄື່ອງມືຊຳລະ ໃນຂອບເຂດທີ່ຕົນຮັບຜິດຊອບ, ກຳນົດ ບັນດາຫຼັກການ, ເຕັກນິກ ກ່ຽວກັບການຊຳລະ ລວມທັງກົນໄກການໄລ່ລຽງ ແລະ ການຫັກບັນຊີ ໃຫ້ບັນດາສະຖາບັນການເງິນ ແລະ ນິຕິບຸກຄົນອື່ນ ທີ່ດຳເນີນທຸລະກິດການຊຳລະ.*

# ***ພາກທີ V***
# ***ການເງິນ ແລະ ການບັນຊີ***

**ມາດຕາ 57 ທຶນ*ສ້າງຕັ້ງ* (ມາດຕາ 6 ເກົ່າ)**

ທະນາຄານແຫ່ງ ສປປ ລາວ *ມີທຶນສ້າງຕັ້ງບໍ່ຫຼຸດ 500 ຕື້ກີບ ຊຶ່ງ*ແມ່ນລັດຖະບານເປັນຜູ້ປະກອບໃຫ້ ແລະ ເປັນເຈົ້າຂອງທຶນແຕ່ພຽງຜູ້ດຽວ. ການເພີ່ມທຶນສ້າງຕັ້ງແຕ່ລະໄລຍະ ແມ່ນລັດຖະບານເປັນຜູ້ກຳນົດ.

***ມາດຕາ 58 ງົບປະມານ***

*ທະນາຄານແຫ່ງ ສປປ ລາວ ມີງົບປະມານເປັນຂອງຕົນເອງ ບໍ່ຂຶ້ນກັບງົບປະມານແຫ່ງລັດ, ສາມາດຄຸ້ມຄອງບໍລິຫານຊັບສິນດ້ວຍຕົນເອງ. ການຈັດຕັ້ງປະຕິບັດງົບປະມານ ຕ້ອງດຳເນີນບົນພື້ນຖານການຮັບຮອງຂອງສະພາບໍລິຫານ ຕາມລະບຽບການສະເພາະຂອງທະນາຄານແຫ່ງ ສປປ ລາວ.*

*ງົບປະມານຂອງທະນາຄານແຫ່ງ ສປປ ລາວ ປະກອບດ້ວຍ ລາຍຮັບ, ລາຍຈ່າຍ ແລະ ການລົງທຶນກໍ່ສ້າງພື້ນຖານໂຄງລ່າງ ແລະ ປະກອບວັດຖຸເຕັກນິກ.*

***ມາດຕາ 59 ລາຍຮັບ***

*ລາຍຮັບຂອງທະນາຄານແຫ່ງ ສປປ ລາວ ປະກອບມີ ລາຍຮັບທີ່ຕິດພັນກັບການປະຕິບັດນະໂຍບາຍເງິນຕາ, ລາຍຮັບຈາກເຄື່ອນໄຫວວຽກງານທົ່ວໄປຕາມພາລະບົດບາດທະນາຄານແຫ່ງ ສປປ ລາວ ແລະ ລາຍຮັບອື່ນໆ. ລາຍຮັບດັ່ງກ່າວ ບໍ່ແມ່ນຖານຄິດໄລ່ອາກອນ ແລະ ຕ້ອງລວມສູນເຂົ້າໃນງົບປະມານຂອງທະນາຄານແຫ່ງ ສປປ ລາວ ເພື່ອຄິດໄລ່ຜົນໄດ້ຮັບສຸດທິປະຈຳປີ ຂອງທະນາຄານແຫ່ງ ສປປ ລາວ.*

***ມາດຕາ 60 ລາຍຈ່າຍ***

*ລາຍຈ່າຍຂອງທະນາຄານແຫ່ງ ສປປ ລາວ ປະກອບມີ ລາຍຈ່າຍທີ່ຕິດພັນກັບການປະຕິບັດນະໂຍບາຍເງິນຕາ ລວມທັງການພິມທະນະບັດ ແລະເງິນຫຼຽນ, ລາຍຈ່າຍວິຊາການ, ບໍລິຫານ ແລະ ລາຍຈ່າຍອື່ນໆ ໃນການເຄື່ອນໄຫວວຽກງານຕາມພາລະບົດບາດຂອງທະນາຄານແຫ່ງ ສປປ ລາວ.*

***ມາດຕາ 61 ການລົງທຶນກໍ່ສ້າງພື້ນຖານໂຄງລ່າງ ແລະ ປະກອບວັດຖຸເຕັກນິກ***

*ການລົງທຶນກໍ່ສ້າງພື້ນຖານໂຄງລ່າງ ແລະ ປະກອບວັດຖຸເຕັກນິກ ແມ່ນການລົງທຶນ ເພື່ອກໍ່ສ້າງ ແລະ ປັບປຸງ ສຳນັກງານ, ຫ້ອງການ, ລະບົບເຕັກໂນໂລຊີ ຂໍ້ມູນຂ່າວສານ, ພາຫະນະ ແລະ ອຸປະກອນຮັບໃຊ້ວຽກງານວິຊາການ.*

*ແຫຼ່ງທຶນຕົ້ນຕໍທີ່ນຳໃຊ້ເຂົ້າໃນການກໍ່ສ້າງພື້ນຖານໂຄງລ່າງ ແລະ ປະກອບວັດຖຸເຕັກນິກ ແມ່ນມາຈາກຄັງຂະຫຍາຍການຜະລິດ ຕາມທີ່ກຳນົດໄວ້ໃນມາດຕາ 63 ຂອງກົດໝາຍສະບັບນີ້.*

**ມາດຕາ 62 *ຜົນໄດ້ຮັບສຸດທິປະຈຳປີ***

*ຜົນໄດ້ຮັບສຸດທິປະຈຳປີ* ຂອງທະນາຄານແຫ່ງ ສປປ ລາວ ແມ່ນສ່ວນຜິດດ່ຽງ *ທີ່ໄດ້ມາຈາກລາຍຮັບຫັກລາຍຈ່າຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 59 ແລະ 60 ຂອງກົດໝາຍສະບັບນີ້.*

*ກໍລະນີຜົນໄດ້ຮັບປະຈຳປີເປັນບວກ ຕ້ອງຈັດສັນຕາມບຸລິມະສິດ ດັ່ງນີ້:*

1. *ແບ່ງເຂົ້າຄັງຂະຫຍາຍການຜະລິດ;*
2. *ແບ່ງເຂົ້າຄັງສຳຮອງທົ່ວໄປ;*
3. *ແບ່ງແກ້ໄຂຂາດທຶນສະສົມ;*
4. *ມອບເຂົ້າງົບປະມານແຫ່ງລັດ.*

*ກໍລະນີຜົນໄດ້ຮັບສຸດທິປະຈຳປີເປັນລົບ, ບ້ວງການປະຕິບັດນະໂຍບາຍເງິນຕາ ໃຫ້ແກ້ໄຂດ້ວຍຄັງສຳຮອງທົ່ວໄປ ຕາມທີ່ກຳນົດໄວ້ໃນມາດຕາ 64 ຂອງກົດໝາຍສະບັບນີ້.*

**ມາດຕາ 63 ຄັງຂະຫຍາຍການຜະລິດ**

ຄັງຂະຫຍາຍການຜະລິດ ແມ່ນຄັງທີ່ສະສົມໄວ້ ເພື່ອເປັນ*ແຫຼ່ງທຶນ* ຂະຫຍາຍການເຄື່ອນໄຫວ ແລະ ຊັບສິນ ຂອງທະນາຄານແຫ່ງ ສປປ ລາວ. *ຄັງຂະຫຍາຍການຜະລິດນີ້ ໄດ້ຈາກການຈັດສັນຜົນໄດ້ຮັບສຸດທິປະຈຳປີ.*

**ມາດຕາ 64 ຄັງສຳຮອງທົ່ວໄປ**

ຄັງສຳຮອງທົ່ວໄປ ແມ່ນຄັງສະເພາະຂອງທະນາຄານແຫ່ງ ສປປ ລາວ ທີ່ສ້າງຂຶ້ນໄວ້ເພື່ອທົດແທນການຂາດທຶນ ຈາກການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ ໃນການປະຕິບັດນະໂຍບາຍເງິນຕາ.

**ມາດຕາ 65 ບັນຊີຄັງສຳຮອງພິເສດ**

ບັນຊີຄັງສຳຮອງພິເສດ ແມ່ນບັນຊີໜຶ່ງ ທີ່ນອນໃນໂຄງປະກອບຂອງບັນຊີທຶນ, ໃຊ້ບັນທຶກ*ສ່ວນຜິດດ່ຽງ* ຊຶ່ງເກີດຈາກການປ່ຽນແປງມູນຄ່າຊັບສິນ ແລະ ໜີ້ສິນ *ຍ້ອນການເໜັງຕີງຂອງລາຄາ ແລະ ອັດຕາແລກປ່ຽນ.*

*ສ່ວນຜິດດ່ຽງ*ຂ້າງເທິງນີ້ ບໍ່*ຖືກ*ຄິດໄລ່ເຂົ້າໃນ*ຜົນໄດ້ຮັບ*ປະຈຳປີຂອງທະນາຄານແຫ່ງ ສປປ ລາວ.

***ມາດຕາ 66 ຫຼັກການບັນຊີ***

*ທະນາຄານແຫ່ງ ສປປ ລາວ ປະຕິບັດວຽກງານການບັນຊີ ຕາມຫຼັກການບັນຊີທີ່ຖືກຍອມຮັບໂດຍທົ່ວໄປ ແລະ ໝູນໃຊ້ມາດຕະຖານສາກົນດ້ານການລາຍງານການເງິນ ໃຫ້ສອດຄ່ອງ ແລະ ເໝາະສົມ ກັບພາລະບົດບາດຂອງທະນາຄານແຫ່ງ ສປປ ລາວ.*

**ມາດຕາ 67 ປີການບັນຊີ**

ປີການບັນຊີຂອງທະນາຄານແຫ່ງ ສປປ ລາວ ເລີ່ມຕົ້ນໃນວັນທີ 1 ມັງກອນ ແລະ ສິ້ນສຸດໃນວັນທີ 31 ທັນວາ ຂອງແຕ່ລະປີ.

***ມາດຕາ 68 ເອກະສານລາຍງານການເງິນ***

*ທະນາຄານແຫ່ງ ສປປ ລາວ ຕ້ອງສ້າງເອກະສານລາຍງານການເງິນປະຈຳເດືອນ, ງວດ ແລະ ປີ. ເອກະສານລາຍງານການເງິນ ປະກອບດ້ວຍ ໃບລາຍງານຖານະການເງິນ, ໃບລາຍງານຜົນການດຳເນີນງານ, ບົດອະທິບາຍຊ້ອນທ້າຍ ແລະ ເອກສານອື່ນໆຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ.*

# ພາກທີ VI
# ການກວດກາ

***ມາດຕາ 69 ອົງການກວດກາ***

*ອົງການກວດກາ ທະນາຄານແຫ່ງ ສປປ ລາວ ປະກອບດ້ວຍ:*

*1. ອົງການກວດກາພາຍໃນ ຊຶ່ງແມ່ນກົງຈັກກວດກາພາຍໃນທີ່ຢູ່ໃນໂຄງປະກອບການຈັດຕັ້ງຂອງທະນາຄານແຫ່ງ ສປປ ລາວ;*

*2. ອົງການກວດກາພາຍນອກ ປະກອບດ້ວຍ ສະພາແຫ່ງຊາດ, ອົງການກວດສອບແຫ່ງລັດ ແລະ ອົງການກວດກາລັດຖະບານ.*

***ມາດຕາ 70 ເນື້ອໃນກວດກາ***

*ການກວດກາການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ ມີເນື້ອໃນຕົ້ນຕໍ ດັ່ງນີ້:*

*1. ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງອື່ນໆ;*
*2. ການຈັດຕັ້ງປະຕິບັດນະໂຍບາຍເງິນຕາ ແລະ ປະສິດທິຜົນຂອງວຽກງານ;*
*3. ເອກະສານລາຍງານການເງິນ;*
*4. ເນື້ອໃນອື່ນໆ ຕາມລະບຽບການກ່ຽວຂ້ອງ.*

**ມາດຕາ 71 ການກວດກາ**

*ທະນາຄານແຫ່ງ ສປປ ລາວ ຕ້ອງດຳເນີນການກວດກາພາຍໃນ ແລະ ພາຍນອກ ຢ່າງເປັນປົກກະຕິ ຊຶ່ງປະກອບມີ ການກວດກາຕາມແຜນ ແລະ ກວດກາສະເພາະກິດ ຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ. ທຸກໆການກວດກາຕ້ອງມີການສະຫຼຸບ ແລະ ຢັ້ງຢືນຜົນການກວດກາ.*

**ມາດຕາ 72 ການກວດກາ*ເອກະສານລາຍງານການເງິນ***

*ເອກະສານລາຍງານການເງິນ ປະຈຳເດືອນ, ງວດ ແລະ ປີ* ຂອງທະນາຄານແຫ່ງ ສປປ ລາວ ຕ້ອງໄດ້ຮັບການກວດກາໂດຍຄະນະກວດກາພາຍໃນທະນາຄານແຫ່ງ ສປປ ລາວ ພ້ອມນີ້, ເອກະສານລາຍງານການເງິນປະຈຳປີ ຕ້ອງໄດ້ຮັບການກວດສອບ ແລະ ຢັ້ງຢືນ ຈາກອົງການກວດສອບແຫ່ງລັດ ຢ່າງເປັນປົກກະຕິ.

**ມາດຕາ 73 ການຮັກສາຄວາມລັບ**

ບຸກຄົນ ແລະ ການຈັດຕັ້ງ ທີ່ປະຕິບັດວຽກງານກວດກາພາຍໃນ ແລະ ພາຍນອກ ແລະ ການປະສານງານອື່ນໆ ຕ້ອງຮັກສາຄວາມລັບໃນບັນຫາທີ່ຕົນໄດ້ຮູ້, ໄດ້ເຫັນ ກ່ຽວກັບເອກະສານ ແລະ ຂໍ້ມູນຕ່າງໆ ຂອງທະນາຄານແຫ່ງ ສປປ ລາວ *ແລະ ສະຖາບັນການເງິນ* ເວັ້ນເສັຍແຕ່ໄດ້ຮັບອະນຸຍາດ *ຈາກຂັ້ນເທິງຂອງຕົນ.*

# *ພາກທີ VII*
# *ລະບອບວິທີເຮັດວຽກ*

***ມາດຕາ 74 ລະບອບເຮັດວຽກ***

*ທະນາຄານແຫ່ງ ສປປ ລາວ ປະຕິບັດຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ, ປະຕິບັດລະບອບຫົວໜ້າດຽວ ບົນພື້ນຖານມີການແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງຂອງພະນັກງານ ລັດຖະກອນທຸກລະດັບ. ທຸກການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ ແມ່ນອີງໃສ່ກົດໝາຍ, ລະບຽບການ ແລະ ຫຼັກການລວມຂອງລັດຖະບານ, ນຳເອົາແນວທາງນະໂຍບາຍຂອງພັກ ແລະ ລັດຖະບານມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນເປັນຈິງ.*

***ມາດຕາ 75 ແບບແຜນວິທີເຮັດວຽກ***

*ທະນາຄານແຫ່ງ ສປປ ລາວ ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ, ປະຕິບັດ ແລະ ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ, ປະສານງານ ແລະສົມທົບຢ່າງແໜ້ນແຟ້ນກັບທຸກຂະແໜງການທັງສູນກາງ, ທ້ອງຖິ່ນ ແລະ ອົງການຈັດຕັ້ງຕ່າງໆຕາມກົດໝາຍ ແລະ ຕາມການມອບໝາຍຂອງລັດຖະບານ.*

# *ພາກທີ VIII*
# *ຂໍ້ຫ້າມ*

***ມາດຕາ 76 ຂໍ້ຫ້າມສຳລັບທະນາຄານແຫ່ງ ສປປ ລາວ ແລະ ພະນັກງານ***

*ຫ້າມທະນາຄານແຫ່ງ ສປປ ລາວ ແລະ ພະນັກງານຂອງທະນາຄານແຫ່ງ ສປປ ລາວ ເຄື່ອນໄຫວ ຫຼື ມີພຶດຕິກຳ ດັ່ງນີ້:*

1. *ລົງສ້າງຕັ້ງວິສາຫະກິດໂດຍກົງ ຫຼື ຮ່ວມທຶນໃນວິສາຫະກິດໃດໜຶ່ງ;*

2. ດຳເນີນທຸລະກິດ, ເປັນທີ່ປຶກສາ, ເປັນພະນັກງານ ໃນຫົວໜ່ວຍທຸລະກິດທີ່ພົວພັນກັບຄວາມຮັບຜິດຊອບຂອງຕົນ;

3. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບຂອງທະນາຄານແຫ່ງ ສປປ ລາວ ໂດຍບໍ່ໄດ້ຮັບອະນຸຍາດ;

4. ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ ແລະ/ຫຼື ໝູ່ຄະນະ;

5. ເມີນເສີຍຕໍ່ຄວາມຮັບຜິດຊອບຂອງຕົນ ແລະ ສໍ້ລາດບັງຫຼວງ;

6. ເຄື່ອນໄຫວ ຫຼື ມີພຶດຕິກຳ ອື່ນໆ ທີ່ບໍ່ຖືກຕ້ອງຕາມກົດໝາຍ.

### ມາດຕາ 77 ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ລະດົມທຶນ ແລະ ດຳເນີນທຸລະກິດ ການເງິນ ການທະນາຄານ ໂດຍບໍ່ໄດ້ຮັບອະນຸຍາດ;
2. ເອົາຊື່ຂອງທະນາຄານແຫ່ງ ສປປ ລາວ ໄປນຳໃຊ້ ເພື່ອຜົນປະໂຫຍດທາງທຸລະກິດຂອງຕົນ;
3. ຂັດຂວາງ, ປະຕິເສດການຮ່ວມການມື ກັບເຈົ້າໜ້າທີ່ກ່ຽວຂ້ອງ ໃນການເຄື່ອນໄຫວວຽກງານການເງິນ ເງິນຕາ;
4. ສະໜອງຂໍ້ມູນຂ່າວສານໃຫ້ແກ່ທະນາຄານແຫ່ງ ສປປ ລາວ ໂດຍບໍ່ຖືກຕ້ອງຕາມຄວາມເປັນຈິງ;
5. ນຳເອົາທະນະບັດ ແລະ/ຫຼື ເງິນຫຼຽນ ໄປຂາຍເພື່ອເກັງກຳໄລ;
6. ປອມແປງ, ທຳລາຍ ທະນະບັດ ແລະ/ຫຼື ເງິນຫຼຽນ ແລະ ນຳໃຊ້ເງິນປອມ;
7. ມີພຶດຕິກຳອື່ນ ທີ່ບໍ່ຖືກຕ້ອງຕາມກົດໝາຍ.

## ພາກທີ IX
## ວັນສ້າງຕັ້ງ, ເຄື່ອງໝາຍ ແລະ ກາປະທັບ

### ມາດຕາ 78 ວັນສ້າງຕັ້ງທະນາຄານ

ວັນສ້າງຕັ້ງທະນາຄານແຫ່ງ ສປປ ລາວ ແມ່ນວັນທີ 7 ຕຸລາ 1968 ແລະ ຖືເອົາວັນທີ 7 ຕຸລາ ຂອງທຸກໆປີ ເປັນວັນພັກຂອງຂະແໜງການທະນາຄານ.

### ມາດຕາ 79 ເຄື່ອງໝາຍ ແລະ ກາປະທັບ

ທະນາຄານແຫ່ງ ສປປ ລາວ ມີເຄື່ອງໝາຍ ແລະ ກາປະທັບ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວິຊາສະເພາະຂອງຕົນ.

ລັກສະນະ ຂອງເຄື່ອງໝາຍ ແລະ ກາປະທັບ ແມ່ນກຳນົດໄວ້ຕ່າງຫາກ.

# ພາກທີ X
## *ນະໂຍບາຍຕໍ່ຜູ້ມີຜົນງານ ແລະ* ມາດຕະການຕໍ່ຜູ້ລະເມີດ

***ມາດຕາ 80 ນະໂຍບາຍຕໍ່ຜູ້ມີຜົນງານ***

*ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນຕາມລະບຽບການ.*

***ມາດຕາ 81 ມາດຕະການຕໍ່ຜູ້ລະເມີດ***

*ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດກົດໝາຍສະບັບນີ້ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ກ່າວເຕືອນ, ປັບໃໝ, ລົງວິໄນ, ໃຊ້ແທນທາງແພ່ງ ຫຼື ລົງໂທດທາງອາຍາຕາມກໍລະນີເບົາ ຫຼື ໜັກ.*

# *ພາກທີ XI*
## *ບົດບັນຍັດສຸດທ້າຍ*

**ມາດຕາ 82 ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 83 ຜົນສັກສິດ**

ກົດໝາຍສະບັບນີ້ມີຜົນສັກສິດນັບແຕ່*ວັນລົງລາຍເຊັນ ແລະ ພາຍຫຼັງລົງຈົດໝາຍເຫດທາງລັດຖະການສິບຫ້າວັນ ເປັນຕົ້ນໄປ.*

ກົດໝາຍສະບັບນີ້ປ່ຽນແທນ *ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1995 ແລະ ກົດໝາຍວ່າດ້ວຍການດັດແປງກົດໝາຍ ເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999.*

ຂໍ້ກຳນົດ, ບົດບັນຍັດໃດທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**